ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2063 - - - /ອຄ

ນະຄອນຫຼວງວຽງຈັນ, ວັນທີ 14 OCT 2009

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດມາດຕະຖານສຽງດັງທີ່ເກີດຈາກໂຮງງານອຸດສາຫະກຳປຸງແຕ່ງ

- ອີງຕາມກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງສະບັບເລກທີ 01/99/ສພຊ. ລົງວັນທີ 3/4/1999.
- ອີງຕາມກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມສະບັບເລກທີ 09/ສພຊ, ລົງວັນທີ 26 ເມສາ 1999 ແລະ ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ເລກທີ 102/ນຍ, ລົງວັນທີ 4/06/2001.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ

## ໝວດທີ I
## ຫຼັກການທົ່ວໄປ

ມາດຕາ 1: **ຈຸດປະສົງ ແລະ ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອ ຄວບຄຸມ, ຕິດຕາມກວດກາ, ກຳນົດມາດຕະຖານ ແລະ ຫຼຸດຜ່ອນຜົນກະທົບດ້ານສຽງທີ່ເກີດຈາກການດຳເນີນກິດຈະການຂອງໂຮງງານອຸດສາຫະກຳ ປຸງແຕ່ງ, ຊຶ່ງອາດມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

ມາດຕາ 2: **ຄວາມໝາຍຂອງຄຳສັບ:**

**ສຽງດັງຈາກໂຮງງານ:** ໝາຍເຖິງລະດັບສຽງດັງທີ່ເກີດຈາກການດຳເນີນກິດຈະການໂຮງງານຊຶ່ງວັດແທກນອກບໍລິເວນໂຮງງານ ແລະ ໃນສະຖານທີ່ເຮັດວຽກຂອງພະນັກງານກຳມະກອນທີ່ມີສຽງດັງສູງກ່ວາລະດັບມາດຕະຖານ ຫຼື ລະດັບສຽງດັງພື້ນຖານ ແລະ ມີລະດັບສຽງດັງລົບກວນເກີນກ່ວາຄ່າທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ລະດັບສຽງດັງລົບກວນ:** ໝາຍເຖິງລະດັບສຽງດັງທີ່ວັດແທກໃນໄລຍະດຳເນີນກິດຈະການໂຮງງານໃນຊ່ວງເວລາເກີດສຽງລົບກວນສົມທຽບກັບມາດຕະຖານແລ້ວເກີນຄ່າມາດຕະຖານທີ່ກຳນົດໄວ້.

**ລະດັບສຽງດັງສະເລ່ຍ 24 ຊົ່ວໂມງ:** ໝາຍເຖິງ ລະດັບສຽງດັງທີ່ກຳນົດເອົາຄ່າສະເລ່ຍຄົງທີ່ຂອງລະດັບສຽງດັງປ່ຽນແປງຕາມເວລາໃນຊ່ວງ 24 ຊົ່ວໂມງ (24 hours A–weighted Equivalent continuous sound Level, Lep 24 hr) ໂດຍມີຫົວໜ່ວຍເປັນເດຊິເບວເອ ຫຼື dB(A).

**ລະດັບສຽງດັງສູງສຸດ:** ໝາຍເຖິງລະດັບສຽງດັງສູງສຸດທີ່ເກີດຂຶ້ນໃນຊ່ວງໄລຍະໃດໜຶ່ງໃນລະຫວ່າງການວັດແທກສຽງດັງໂດຍມີຫົວໜ່ວຍເປັນເດຊິເບວເອ ຫຼື dB(A).

**ເຄື່ອງວັດແທກລະດັບສຽງດັງ:** ໝາຍເຖິງ ເຄື່ອງກວດວັດແທກລະດັບສຽງດັງຕາມມາດຕະຖານ IEC 60804 ຫຼື IEC 61672 ຂອງຄະນະກຳມະທິການລະຫວ່າງປະເທດວ່າດ້ວຍເທັກນິກໄຟຟ້າ (International Electro technical Commission, IEC)

**ບໍລິເວນໂຮງງານ:** ໝາຍເຖິງຂອບເຂດສະຖານທີ່ ເພື່ອດຳເນີນການຜະລິດ, ປະກອບ, ສ້ອມແປງ, ບັນຈຸ ຫຼື ປຸງແຕ່ງຄືນໃໝ່.

**ລະບົບປ້ອງກັນ:** ໝາຍເຖິງລະບົບວິທີການປ້ອງກັນ, ຄວບຄຸມ ແລະ ຫຼຸດຜ່ອນມົນລະພິດດ້ານສຽງດັງທີ່ເກີດຈາກໂຮງງານອຸດສາຫະກຳ ປຸງແຕ່ງ, ໂດຍສ້າງລະບົບຄຸ້ມຄອງສຽງດັງ ແລະ ນຳໃຊ້ເຕັກໂນໂລຊີຕ່າງໆ ຊ່ວຍຫຼຸດຜ່ອນສຽງດັງ.

## ໝວດທີ II
## ວ່າດ້ວຍການກຳນົດຄ່າມາດຕະຖານສຽງດັງ

**ມາດຕາ 3:** **ການກຳນົດຄ່າມາດຕະຖານສຽງດັງຢູ່ສະຖານທີ່ເຮັດວຽກ**

ມາດຕະຖານສຽງດັງທີ່ເກີດຈາກໂຮງງານອຸດສາຫະກຳ ປຸງແຕ່ງ ທີ່ວັດແທກຢູ່ສະຖານທີ່ເຮັດວຽກຂອງກຳມະກອນພາຍໃນໂຮງງານ ຕ້ອງບໍ່ເກີນທີ່ກຳນົດໄວ້ ດັ່ງລາຍລະອຽດລຸ່ມນີ້:

| ລ/ດ | ຄ່າມາດຕະຖານບໍ່ເກີນ | ຫົວໜ່ວຍ | ໄລຍະເວລາເຮັດວຽກ |
|---|---|---|---|
| 1 | *80* | dB(A) | 24 ຊົ່ວໂມງ |
| 2 | *85* | dB(A) | 8 ຊົ່ວໂມງ |
| 3 | *88* | dB(A) | 4 ຊົ່ວໂມງ |
| 4 | *91* | dB(A) | 2 ຊົ່ວໂມງ |
| 5 | *94* | dB(A) | 1 ຊົ່ວໂມງ |
| 6 | *97* | dB(A) | 30 ນາທີ |
| 7 | *100* | dB(A) | 15 ນາທີ |
| 8 | *103* | dB(A) | 7.5 ນາທີ |
| 9 | *106* | dB(A) | 4 ນາທີ |

**ມາດຕາ 4:** **ມາດຕະຖານສຽງດັງຢູ່ນອກບໍລິເວນໂຮງງານ ແລະ ໃນເວລາກາງຄືນ**

ມາດຕະຖານສຽງດັງທີ່ເກີດຈາກໂຮງງານອຸດສາຫະກຳ ປຸງແຕ່ງ ທີ່ວັດແທກຢູ່ນອກບໍລິເວນໂຮງງານຕ້ອງບໍ່ເກີນທີ່ກຳນົດໄວ້ ດັ່ງລາຍລະອຽດລຸ່ມນີ້:

ກ. ຄ່າລະດັບສຽງດັງສູງສຸດ ທີ່ເກີດຈາກການປະກອບກິດຈະການໂຮງງານ ບໍ່ເກີນ 70 dB(A) ໃນເວລາກາງເວັນ.

ຂ. ຄ່າລະດັບສຽງດັງສູງສຸດ ທີ່ເກີດຈາກການປະກອບກິດຈະການໂຮງງານ ບໍ່ເກີນ 55 dB(A) ໃນເວລາກາງຄືນ.

## ໝວດທີ III
## ຂໍ້ຫ້າມ ແລະ ພັນທະຂອງຜູ້ດຳເນີນກິດຈະການໂຮງງານ

### ມາດຕາ 5: ຂໍ້ຫ້າມກ່ຽວກັບສຽງດັງທີ່ເກີດຈາກໂຮງງານ

ຫ້າມໂຮງງານອຸດສາຫະກຳປຸງແຕ່ງດຳເນີນກິດຈະກຳທີ່ກໍ່ໃຫ້ເກີດສຽງດັງເກີນມາດຕະຖານຂອງຂໍ້ຕົກລົງສະບັບນີ້, ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງມີຜົນກະທົບໂດຍກົງ ຫຼື ທາງອ້ອມຕໍ່ສຸຂະພາບຂອງຄົນ ແລະ ສິ່ງທີ່ມີຊີວິດອື່ນໆ.

### ມາດຕາ 6: ພັນທະຂອງຜູ້ດຳເນີນກິດຈະການໂຮງງານ

ຜູ້ດຳເນີນກິດຈະການໂຮງງານຕ້ອງຈັດຕັ້ງປະຕິບັດລະບຽບ, ຫຼັກການ ໃຫ້ໄດ້ຕາມມາດຕະຖານສຽງດັງຂອງຂໍ້ຕົກລົງສະບັບນີ້ ແລະ ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

ກ. ຜູ້ດຳເນີນກິດຈະການໂຮງງານຕ້ອງນຳໃຊ້ເຕັກໂນໂລຊີທີ່ມີສຽງດັງຄ່ອຍ, ຕ້ອງໄດ້ບຳລຸງຮັກສາເຄື່ອງຈັກຢ່າງສະໝໍ່າສະເໝີເພື່ອຫຼຸດຜ່ອນສຽງດັງ

ຂ. ຜູ້ດຳເນີນກິດຈະການໂຮງງານຕ້ອງອອກແບບ ແລະ ຕິດຕັ້ງລະບົບຄວບຄຸມສຽງດັງ.

## ໝວດທີ IV
## ການຢັ້ງຢືນຜົນວັດແທກດ້ານສຽງດັງ

### ມາດຕາ 7: ໃບຢັ້ງຢືນຜົນການກວດກາວັດແທກສຽງດັງ

ໂຮງງານອຸດສາຫະກຳ ປຸງແຕ່ງ ທີ່ດຳເນີນກິດຈະການກ່ອນການປະກາດໃຊ້ຂໍ້ຕົກລົງສະບັບນີ້ ແລະ ໂຮງງານຂໍສະເໜີສ້າງຕັ້ງໃໝ່ຕ້ອງໃຫ້ມີໃບຢັ້ງຢືນຜົນວັດແທກດ້ານສຽງດັງທີ່ເກີດຈາກໂຮງງານ ຫຼື ກິດຈະການຂອງຕົນ.

### ມາດຕາ 8: ຜູ້ອອກຢັ້ງຢືນຜົນວັດແທກມາດຕະຖານດ້ານສຽງດັງ

ຄວາມຮັບຜິດຊອບໃນການອອກຢັ້ງຢືນຜົນວັດແທກມາດຕະຖານດ້ານສຽງດັງຈາກໂຮງງານແມ່ນສິດຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຫຼື ບໍລິສັດທີ່ປຶກສາດ້ານສິ່ງແວດລ້ອມທີ່ຖືກຍອມຮັບຈາກກະຊວງອຸດສາຫະກຳ ແລະ ການຄ້າ

## ໝວດທີ V
## ສິດຂອງເຈົ້າໜ້າທີ່ກວດກາໂຮງງານກ່ຽວກັບສິ່ງແວດລ້ອມ

**ມາດຕາ 9: ເຈົ້າໜ້າທີ່ກວດກາສິ່ງແວດລ້ອມໂຮງງານ**

ສາມາດເຂົ້າໄປທຸກສະຖານທີ່ຂອງໂຮງງານອຸດສາຫະກຳປຸງແຕ່ງເພື່ອກວດກາ, ສັງເກດ, ວັດແທກສຽງດັງ, ຖ້າການກວດກາວັດແທກຫາກພົບເຫັນຄ່າວັດແທກສຽງດັງເກີນມາດຕະຖານຕາມຂໍ້ຕົກລົງສະບັບນີ້ ແລະ ເຫັນວ່າມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ເຈົ້າໜ້າທີ່ກວດກາສິ່ງແວດລ້ອມໂຮງງານມີສິດສະເໜີຕໍ່ຂັ້ນເທິງຂອງຕົນ ເພື່ອ:

ກ. ໃຫ້ຜູ້ດຳເນີນກິດຈະການໂຮງງານຢຸດຕິຂອດກິດຈະການທີ່ເກີດມີສຽງດັງຈາກໂຮງງານອຸດສາຫະກຳປຸງແຕ່ງ ຈົນກວ່າປັບປຸງລະບົບປ້ອງກັນ ຫຼື ວິທີການຄວບຄຸມສຽງດັງໃຫ້ໄດ້ຕາມມາດຕະຖານ.

ຂ. ໃຫ້ເຈົ້າຂອງໂຮງງານອຸດສາຫະກຳປຸງແຕ່ງຕ້ອງປັບປຸງລະບົບປ້ອງກັນ ຫຼື ວິທີການຄວບຄຸມສຽງດັງໃຫ້ໄດ້ມາດຕະຖານແລ້ວຈຶ່ງສະເໜີຂະແໜງອຸດສາຫະກຳ ແລະ ການຄ້າເພື່ອພິຈາລະນາຄືນ.

**ມາດຕາ 10: ສິດຂອງຫົວໜ້າກົມອຸດສາຫະກຳ ຫຼື ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ມີຄື:**

ກ. ມີສິດສັ່ງໂຈະການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງທີ່ມີສຽງດັງເກີນມາດຕະຖານ, ໂຮງງານທີ່ຖືກສັ່ງໂຈະຕ້ອງຢຸດຕິດຳເນີນກິດຈະການໂຮງງານໂດຍທັນທີ.

ຂ. ໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ປັບປຸງລະບົບປ້ອງກັນ ຫຼື ວິທີການຄວບຄຸມສຽງດັງແລ້ວຕ້ອງສະເໜີຕໍ່ກົມອຸດສາຫະກຳ ຫຼື ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາຄືນໃໝ່.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 11: ນະໂຍບາຍຕໍ່ຜູ້ມີຜົນງານ**

ໂຮງງອຸດສາຫະກຳປຸງແຕ່ງ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນວຽກງານປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ຈະໄດ້ຮັບການຍ້ອງຍໍ ຫລືການປະຕິບັດນະ

ໂຍບາຍອື່ນໆ ໃນການດຳເນີນກິດຈະການໂຮງງານ ຕາມຄວາມເໝາະສົມ.

### ມາດຕາ 12: ມາດຕະການຕໍ່ຜູ້ລະເມີດ

ໂຮງງານອຸດສາຫະກຳ ປຸງແຕ່ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ແລະ ໃສ່ໂທດ ຕາມກໍລະນີໜັກ ຫຼື ເບົາ ດັ່ງລຸ່ມນີ້:

ກ. ຖືກຕັກເຕືອນ, ເພື່ອທຳການປັບປຸງລະບົບການປ້ອງກັນ ຫຼື ວິທີການຄວບຄຸມສຽງດັງ ທີ່ເກີດຈາກການດຳເນີນກິດຈະການຂອງໂຮງງານອຸດສາຫະກຳປຸງແຕ່ງ.

ຂ. ຢຸດຕິການດຳເນີນກິດຈະການໂຮງງານຊົ່ວຄາວເພື່ອທຳການປັບປຸງລະບົບການປ້ອງກັນ, ເຕັກນິກ ຫຼື ວິທີການຄວບຄຸມສຽງດັງຂອງໂຮງງານອຸດສາຫະກຳປຸງແຕ່ງ.

ຄ. ຖອນໃບອະນຸຍາດດຳເນີນກິດຈະການໂຮງງານ, ປັບໃໝ ແລະ ໃສ່ໂທດຕາມລະບຽບກົດໝາຍ ອື່ນທີ່ກ່ຽວຂ້ອງ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

### ມາດຕາ 13: ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

### ມາດຕາ 14: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ